# ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູສອນຊັ້ນປະຖົມສຶກສາຢູ່ນະຄອນປາກເຊ ແຂວງຈຳປາສັກ

*ລຳພັນ ເກດມາລາ[1], ສົມໄຊ ເທບສົມບັດ[2], ລັດດາພອນ ພະໄຊສິດທິເດດ[3], ບຸນສົງ ສໍແກ້ວມະນີ[4]*

*ນັກສຶກສາປະລິນຍາໂທ ສາຂາວິຊາວິທະຍາສາດການສຶກສາ ມະຫາວິທະຍາໄລຈຳປາສັກ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ 1). ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ 2). ເພື່ອປຽບທຽບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ ຈຳແນກຕາມເພດ, ອາຍຸ, ວຸດທິການສຶກສາ ແລະປະສົບການໃນການເຮັດວຽກ. 3). ເພື່ອສຶກສາຄວາມຕ້ອງການພັດທະນາທັກສະການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງ ຈຳປາສັກ. ກຸ່ມຕົວຢ່າງທີ່ໃຊ້ຄູສອນໂຮງຮຽນປະຖົມສຶກສາພາກລັດທັງໝົດ 34 ແຫ່ງ ເຊິ່ງມີຈຳນວນ 131 ຄົນ ໂດຍເລືອກແບບຕາຕະລາງສຳເລັດຮູບ Krejcie and Morgan ແລະ ຜູ້ບໍລິຫານ 5 ທ່ານ ໂດຍເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ ເປັນແບບສອບຖາມ, ແບບສຳພາດ ແລະ ສະຖິຕິທີ່ໃຊ້ໃນການວິເຄາະປະກອບມີ ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ ($\bar{X}$ ), ຄ່າຜັນປ່ຽນມາດຕະຖານ (SD), ຄ່າ t-test ແລະ ຄ່າ F-test

**ຜົນການຄົ້ນຄວ້າພົບວ່າ:**

ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກ ໂດຍລວມ ຢູ່ໃນລະດັບຫຼາຍ ($\bar{X}$ = 4.20, S.D= 0.45). ເມື່ອພິຈາລະນາເປັນແຕ່ລະດ້ານ ພົບວ່າ ທຸກດ້ານຢູ່ໃນລະດັບຫຼາຍ ຊຶ່ງລຽງຕາມລຳດັບ ຄ່າສະເລ່ຍແຕ່ຫຼາຍຫາໜ້ອຍຕາມລຳດັບເຫັນວ່າດ້ານເຕັກນິກການສອນ ມີຄ່າສະເລ່ຍຫຼາຍກວ່າໝູ່ ($\bar{X}$= 4.36, S.D = 0.47), ຮອງລົງມາແມ່ນດ້ານຄວາມຮູ້ກ່ຽວກັບຜູ້ຮຽນ ($\bar{X}$= 4.26, S.D= 0.51), ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ ($\bar{X}$= 4.21, S.D = 0.54) ແລະ ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບຄູ ($\bar{X}$= 3.85, S.D = 0.76).

ການປຽບທຽບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູສອນຊັ້ນປະຖົມສຶກສານະຄອນປາກເຊ ແຂວງຈຳປາສັກ ຈຳແນກຕາມເພດ, ອາຍຸ, ວຸດທິການສຶກສາ ແລະ ປະສົບການທີ່ແຕກຕ່າງກັນ ມີຄວາມຄິດເຫັນຕໍ່ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນ ໂດຍພາບລວມ ແລະ ແຕ່ລະດ້ານຢູ່ໃນລະດັບຫຼາຍ ແລະ ມີຄວາມຄິດເຫັນບໍ່ແຕກຕ່າງກັນ ຢ່າງມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ເພື່ອເປັນການພັດທະນາການຮຽນການສອນຂອງຄູຊັ້ນປະຖົມສຶກສາ ຄູມີຄວາມຕ້ອງການຝຶກອົບຮົມ ແລະ ແລກປ່ຽນວິຊາການ, ເພື່ອຖອດຖອນບົດຮຽນໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່. ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບລາຍວິຊາເປັນຢ່າງດີ ແລະ ເລັ່ງໃສ່ການຮຽນການສອນໃຫ້ໄດ້ຕາມເປົ້າໝາຍຂອງຫຼັກສູດ, ຄູຄວນຍົກລະດັບຄວາມຮູ້ຂອງ

[1] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[2] *ວິທະຍາໄລຄູປາກເຊ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

ຕົນກ່ຽວກັບການແຕ່ງບົດສອນ, ລິງເລີກວິທີການສອນຕ່າງໆ ແລະ ການຄັດເລືອກເອົາເນື້ອໃນທີ່ຈະໄປສອນໃຫ້ສອດຄ່ອງ ແລະ ແທດເໝາະກັບຈຸດປະສົງຂອງການສອນ, ຄູສຶກສານິເທດ ຄວນຈັດຕັ້ງປະຕິບັດການລົງຕິດຕາມຊຸກຍູ້ ແລະ ຊ່ວຍເຫຼືອຢ່າງທົ່ວເຖິງ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ນອກຈາກນີ້ຄູຕ້ອງເອົາໃຈໃສ່ຄົ້ນຄວ້າຊອກຮູ້ຮໍ່າຮຽນ, ເຕັກນິກວິທີການສອນ ທີ່ສອດຄ່ອງກັບຄໍາແນະນໍາໃນການແຕ່ງບົດສອນ, ຜູ້ບໍລິຫານຄວນມີການຈັດການກວດກາ, ຕິດຕາມການຈັດການຮຽນການສອນຢ່າງເຄັ່ງຄັດ ພ້ອມທັງມີການຈັດຝຶກອົບຮົມການຜະລິດສື່ການສອນ, ແນະນໍາການນໍາໃຊ້ສື່ການສອນໃຫ້ຄູສອນອີກດ້ວຍ.

# FACTORS AFFECTING THE TEACHING EFFECTIVENESS OF PRIMARY SCHOOL TEACHERS IN PAKSE CITY, CHAMPASAK PROVINCE


**Abstract**

The purpose of this study is 1) to study the factors affecting the teaching effectiveness of primary school teachers in Pakse City, Champasak Province 2). to compare the factors affecting the teaching effectiveness of primary school teachers in Pakse City, Champasak Province, by gender, age, educational qualification and work experience. 3) to study the teaching skills development needs of primary school teachers in Pakse City, Champasak Province. The samples of this research were 131 teachers in 34 public primary schools in Pakse City, Champasak Province selected by Krejcie and Morgan's finished table model and 5 administrators selected by specific model. The research instument were questionnaires and interviews. The statistics used to analyse data were frequency, percentage, mean, standard deviation, t-test and F-test .

**The research results found that:**

Factors affecting the teaching effectiveness of primary school teachers in Pakse City, Champasak Province was at a high level as a whole ($\bar{X}$ = 4.20, S. D= 0.45). When considering each aspect, it is found that all aspects were at high level, which are arranged in the order of average value, from more to less, according to the order, it is found that the teaching technique has more average value than others ($\bar{X}$ = 4.36, S.D = 0.47), followed by the knowledge of the students ($\bar{X}$ = 4.26, S.D= 0.51), the knowledge of subjects and course goals ($\bar{X}$ = 4.21, S.D = 0.54) and the teacher's professional responsibility. ($\bar{X}$ = 3.85, SD = 0.76).

Comparison of factors affecting the teaching effectiveness of primary school teachers in Pakse City, Champasak Province, distinguished by gender, age, educational qualifications and different experiences. There were opinions on the factors that affect the effectiveness of teaching was at a high level as a whole and in each aspect and there are no different opinions at a statistical significance level of 0.05.

In order to develop the teaching and learning of primary school teachers, teachers need training and technical exchange, to learn lessons on using the updated curriculum, to understand the subjects and speed up the learning and teaching according to the course goals, teachers should upgrade their knowledge of teaching, deepen various teaching methods and select the content to be taught in accordance with the objectives of teaching, guidance teachers should implement monitoring, encouragement and support in a systematic and continuous manner. In addition, teachers must pay attention to researching learning methods, teaching methods that are in line with the guidelines for teaching lessons, administrators should have an arrangement to inspect and

monitor the arrangement of teaching and learning strictly as well as organizing training in the production of teaching materials, recommending the use of teaching materials to teachers as well.

**1. ພາກສະເໜີ**

ລັດຖະບານ ສປປ ລາວ ໄດ້ກຳນົດວິໄສທັດໃນການພັດທະນາວັດທະນະທຳ-ສັງຄົມ ຮອດປີ 2030 ຄື: ຊັບພະຍາກອນມະນຸດໄດ້ຮັບການພັດທະນາໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ,ເປັນກຳລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກວ່າ 75 ປີ. ຄຽງຄູ່ກັບວິໄສທັດຮອດປີ 2030 ທີ່ກ່າວມານີ້, ລັດຖະບານຍັງໄດ້ກຳນົດທິດທາງລວມຂອງຍຸດທະສາດການພັດທະນາເສດຖະກິດ-ສັງຄົມຮອດປີ 2025, ຊຶ່ງໜຶ່ງໃນນັ້ນລັດຖະບານໄດ້ຖືເອົາການພັດທະນາວັດທະນະ ທຳ-ສັງຄົມ ເປັນບູລິມະສິດສູງສຸດຂອງຍຸດທະສາດການພັດທະນາໂດຍສຸມໃສ່ຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ, ແກ້ໄຂຄວາມທຸກຍາກ, ພັດທະນາຂະແໜງການສຶກສາ, ວັດທະນະທຳ, ພັດທະນາສີມືແຮງງານທາງດ້ານປະລິມານ ແລະ ຄຸນນະພາບໃຫ້ໄດ້ຫຼາຍຂຶ້ນ (ກະຊວງສຶກສາທິການແລະ ກິລາ, 2015: 9).

ໂດຍຜັນຂະຫຍາຍຈາກວິໄສທັດທີ່ກ່າວມານີ້, ກະຊວງສຶກສຶກສາທິການ ແລະ ກິລາໄດ້ກຳນົດວິໄສທັດຄື: ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ ຄວາມສາມສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ, ແຂ່ງຂັນກັບ ພາກພື້ນ ແລະ ສາກົນໄດ້. ໂດຍຈຸດປະສົງລວມຂອງແຜນຍຸດທະສາດພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາທິການ ແລະ ກິລາ 2020 - 2025 ໄດ້ວາງໄວ້ໃນການສົ່ງເສີມການຝຶກອົບຮົມ, ຍົກລະດັບຄູ, ບຸກຄະລາກອນການສຶກສາ ແລະ ກິລາ ໃນການຝຶກອົບຮົມ ແລະ ຍົກລະດັບຄູ (ກະຊວງສຶກສາທິການ ແລະ ກິລາ, 2020: 16). ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025), ຂອງກະຊວງສຶກສາ ທິການ ແລະ ກິລາໄດ້ກຳນົດໃນກິດຈະກຳໃນຂະແໜງການຍ່ອຍການຍ່ອຍປະຖົມສຶກສາ ແລະ ຂະແໜງການສຶກສາຄູ, ຜົນການຮຽນໃນຊັ້ນປະຖົມສຶກສາ ຍັງເປັນບັນຫາທີ່ເລັ່ງດ່ວນ, ໂດຍສະເພາະຄວາມສາມາດຂອງນັກຮຽນໃນການອ່ານ-ຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານ, ຈັນຍາບັນຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຄູຈຳນວນໜຶ່ງຍັງບໍ່ສູງ, ຄວາມຮູ້ດ້ານວິຊາສະເພາະ ແລະ ທັກສາການສິດສອນຂອງຄູຍັງບໍ່ສູງ, ການຝຶກອົບຮົມຄູປະຈຳການຍັງບໍ່ມີປະສິດທິພາບເທົ່າທີ່ຄວນ ແລະ ທົ່ວເຖິງ, ລະບົບການຕິດຕາມການສອນຂອງຄູຍັງບໍ່ມີປະສິດທິພາບ, ການປະເມີນການຮຽນຂອງນັກຮຽນໃນຫ້ອງຮຽນບໍ່ເປັນປົກກະຕິ, ການໃຫ້ການຊ່ວຍເຫຼືອຄູນິເທດຍັງບໍ່ທົ່ວເຖິງຍັງມີຂໍ້ຈຳກັດດ້ານງົບປະມານ, ຫຼັກສູດການສ້າງຄູ ແລະ ຫຼັກສູດສາຍສາມັນຍັງບໍ່ທັນສອດຄ່ອງກັນ. ພ້ອມກັນນັ້ນສິ່ງທ້າທາຍອີກຈຳນວນໜຶ່ງປະກອບມີ: ຄວາມສອດຄ່ອງກັນລະຫວາ່ງການວາງແຜນການສ້າງຄູ ແລະ ຕົວເລກການບັນຈຸຄູ ເພື່ອສະໜອງໃຫ້ແກ່ບາງວິຊາທີ່ຂາດຄູ; ການພັດທະນາລະບົບການຝຶກອົບຮົມຄູປະຈຳການພາຍໃນໂຮງຮຽນ; ການພັດທະນາຄູ ແລະ ເຄືອຂ່າຍວິຊາຊີບຄູ ເພື່ອຮ່ວມມືກັນໃນການພັດທະນາຄຸນນະພາບການສອນ ໂດຍສະເພາະການແລກປ່ຽນບົດຮຽນລະຫວ່າງຄູດ້ວຍກັນ, ການພັດທະນາລະບົບປະກັນຄຸນນະພາບ ແລະ ການພັດທະນາບຸກຄະລາກອນ

ໃນສະຖານການສ້າງຄູ. ເຖິງແມ່ນວ່າມາດຖານຄູໄດ້ຖືກຮອງຮັບແລ້ວໃນປີ 2015, ແຕ່ຍັງບໍ່ທັນສອດຄ່ອງກັບຂອບສະມັດຖະພາບຄູອາຊີບ ເຊິ່ງມີຄວາມຈຳເປັນຕ້ອງໄດ້ມີການປັບປຸງຕື່ມ (ກະຊວງສຶກສາທິການ ແລະ ກິລາ:103-157).

ຈາກການສັງລວມບັນຫາ ແລະ ສິ່ງທີ່ທ້າທາຍ, ພະແນກສຶກສາທິການ ແລະ ກິລາ ໄດ້ມີການກຳນົດວຽກງານຈຸດສຸມທີ່ເປັນບູລິມະສິດ ເພື່ອຈັດຕັ້ງປະຕິບັດແນໃສ່ໃຫ້ບັນລຸບັນດາຄາດໝາຍ ແລະ ນະໂຍບາຍທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2020-2021 ກໍຄືຄາດໝາຍ ທີ່ສະພາທີ່ໄດ້ກຳນົດໄວ້ແຕ່ກໍຍັງມີຫຼາຍບັນຫາທີ່ຍັງຄົງຄ້າງ ໂດຍສະເພາະແມ່ນອັດຕາເຂົ້າຮຽນລວມຍັງຕ່ຳ, ອັດຕາການປະລະ ແລະ ອັດຕາການຄ້າງຫ້ອງ ໃນແຕ່ລະຊັ້ນຮຽນຍັງສູງເມື່ອທຽບໃສ່ຊຸມປີຜ່ານມາ. ນັກຮຽນໃນຊັ້ນປະຖົມ ແລະ ມັດທະຍົມ ສ່ວນໃຫຍ່ແມ່ນຍັງອ່ອນ ວິຊາ: ພາສາລາວ ແລະ ຄະນິດສາດ ສາເຫດອາດຈະເກີດຈາກຫຼາຍປັດໄຈ ເປັນຕົ້ນ ຜູ້ອຳນວຍການໂຮງຮຽນ ແລະ ຄູສອນຈຳນວນໜຶ່ງຂາດຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ຂອງຕົນ, ມີບາງໂຮງຮຽນຂາດເຂີນຄູ ເຮັດໃຫ້ໂຮງຮຽນຈຳນວນໜຶ່ງ ບໍ່ໄດ້ຈັດການສິດສອນ ໂດຍສະເພາະຢູ່ເຂດເກາະດອນ ຫຼື ເຂດທີ່ຫ່າງໄກສອກຫຼີກ ໂຮງຮຽນບໍ່ໜ້ອຍ ຈຳຕ້ອງໄດ້ສະ ໜອງການສອນຫ້ອງຄວບ, ອັດຕາຄ້າງຫ້ອງຂອງນັກຮຽນສາມັນຍັງສູງ ຢູ່ຫຼາຍເມືອງ, ການປະສານສົບທົບລະຫວ່າງໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ຍັງບໍ່ທັນເຂັ້ມແຂງ (ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ ສຶກສາ ແລະ ກິລາ ປະຈຳສົກ ຮຽນ 2020-2021: 8). ການຂະຫຍາຍໂອກາດການສຶກສາຊັ້ນປະຖົມສຶກສາຢູ່ແຂວງຈຳປາສັກໂດຍລວມ ແລະ ຢູ່ນະຄອນປາກເຊ ໂດຍສະເພາະຍັງພົບຄວາມຫຍຸ້ງຍາກໃນຫຼາຍດ້ານ ເຊັ່ນ: ການຂະຫຍາຍໂຮງຮຽນໄປໄດ້ທຸກໆບ້ານ, ສະພາບແວດລ້ອມຂອງໂຮງຮຽນ ຍັງບໍ່ທັນດຶງດູດຈິດໃຈຂອງຄູ ແລະ ນັກຮຽນ, ຄຸນນະພາບການຮຽນການສອນຍັງຕ່ຳ, ຜົນການຮຽນຂອງນັກຮຽນຕ່ຳອັນມີສາຍເຫດມາຈາກການລິງຊຸກຍູ້ ແລະ ຊ່ວຍເຫຼືອຄູສຶກສານິເທດຍັງບໍ່ໄດ້ຈັດຕັ້ງປະຕິບັດເປັນລະບົບ ແລະ ຕໍ່ເນື່ອງ, ຄູຈຳນວນໜຶ່ງບໍ່ເອົາໃຈໃສ່ໃນການສິດສອນ, ບໍ່ປະຕິບັດຕາມບາດກ້າວການສິດສອນ, ບໍ່ຊອກຮູ້ ຮໍ່າຮຽນ, ການແຕ່ງບົດສອນບໍ່ລະອຽດ ບໍ່ຄົບຖ້ວນ, ການສອນບໍ່ມີຄຸນນະພາບ ແລະ ການຈັດການກວດກາຂອງບາງຄົນບໍ່ເຄັ່ງຄັດຈຶ່ງເຮັດໃຫ້ນັກຮຽນບາງຄົນຈົບຊັ້ນປະຖົມສຶກສາແລ້ວແຕ່ ທັກສະການອ່ານ, ການຂຽນພາສາລາວ ແລະ ຄິດໄລ່ເລກຂັ້ນພື້ນຖານ ຍັງບໍ່ພຽງພໍທີ່ຈະຊ່ວຍໃຫ້ເຂົາຮຽນຢ່າງມີຄຸນນະພາບໃນຂັ້ນຕໍ່ໆໄປ (ພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ, 2021: 2).

ການຍົກສູງຄຸນນະພາບການສອນຂອງຄູສອນຊັ້ນປະຖົມສຶກສາແມ່ນມີຄວາມສຳຄັນຕໍ່ການປັບປຸງການຈັດການຮຽນການສອນໃນຊັ້ນປະຖົມສຶກສາ ເພື່ອຮັບປະກັນຜົນສຳເລັດໃນການຮຽນຂອງນັກຮຽນ ກໍຄືການພັດທະນາ ຄຸນນະພາບການສຶກສາໃຫ້ໃກ້ຄຽງກັບພາກພື້ນ ແລະ ສາກົນເປັນກ້າວໆ. ສະນັ້ນ, ສຳລັບແຜນພັດທະນາຂະແໜງ ການສຶກສາ 5 ປີ 2021-2025 ໄດ້ກ່າວເຖິງ ການສະໜັບສະໜູນທາງດ້ານວິຊາການຄູເປັນປັດໄຈທີ່ສຳຄັນ ເພື່ອໃຫ້ບັນລຸຜົນໄດ້ຮັບ ເຊິ່ງຈຳນວນນັກຮຽນຊັ້ນປະຖົມສຶກສາທີ່ມີຄວາມສາມາດເພິ່ງພາຕົນເອງໄດ້ໃນການອ່ານ, ການຂຽນ ແລະ ການຄຳນວນເລກພື້ນຖານ. ເຊິ່ງໃນນັ້ນ, ຄຸນນະພາບການສອນຂອງຄູແມ່ນປັດໄຈທີ່ສຳຄັນ ໃນການຮັບປະກັນຄຸນນະພາບການສຶກສາແຫ່ງຊາດ (UNICEF, 2016: 5)

ຈາກການສຶກສາບັນຫາທີ່ສຳຄັນດັ່ງກ່າວໃນເບື້ອງຕົ້ນ, ຄວາມຮູ້ ຫຼື ປະສົບການທີ່ຜູ້ຮຽນຈະໄດ້ຮັບຈາກການຮຽນຫຼາຍປານໃດນັ້ນແມ່ນຂຶ້ນກັບປະສິດພາບຂອງການຈັດການຮຽນການສອນຂອງຄູ ແລະ ຫຼາຍປັດໄຈອື່ນໆ. ຜູ້ວິໄຈຈຶ່ງໄດ້ເກີດຄວາມສົນໃຈ ສຶກສາຄົ້ນຄວ້າ ຫົວຂໍ້ "**ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ**" ເພື່ອເປັນແນວທາງໃນການພັດທະນາການສອນຂອງຄູໃຫ້ມີປະສິດທິພາບໃຫ້ເກີດປະໂຫຍດໃນການຈັດການຮຽນການສອນໃນຫ້ອງຮຽນ, ພ້ອມທັງເປັນຂໍ້ມູນຂັ້ນພື້ນຖານໃນການພັດທະນາໃນຂະແໜງການຍ່ອຍຂັ້ນປະຖົມສຶກສາ ເພື່ອໃຫ້ສອດຄ່ອງກັບວິໄສທັດການພັດທະນາການ ສຶກສາ ແລະ ກິລາ ຮອດປີ 2030 ແລະ ແຜນຍຸດທະສາດຮອດປີ 2025 ຂອງລັດຖະບານ ສປປ ລາວ ໄດ້ກຳນົດຈຸດປະສົງ ແລະ ນະໂຍບາຍປະຕິຮູບການສຶກສາຂອງລັດ ທັງເປັນຜົນປະໂຫຍດ ແລະ ເປັນທິດທາງໃນການແກ້ໄຂບັນຫາ, ພັດທະນາ, ປັບປຸງ ແລະ ນຳໃຊ້ໃນການຈັດການຮຽນການສອນໃຫ້ມີປະສິດທິພາບສູງຂຶ້ນ.

## 2. ຈຸດປະສົງຂອງການວິໄຈ

1.1 ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາຢູ່ນະຄອນປາກເຊ ແຂວງຈຳປາສັກ

1.2 ເພື່ອປຽບທຽບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາຢູ່ນະຄອນປາກເຊ ແຂວງຈຳປາສັກ ຈຳແນກຕາມເພດ, ອາຍຸ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ.

1.3 ພື່ອສຶກສາຄວາມຕ້ອງການພັດທະນາທັກສະການສອນຂອງຄູຊັ້ນປະຖົມສຶກສາຢູ່ນະຄອນປາກເຊແຂວງຈຳປາສັກ

## 3. ສົມມຸດຖານ

ຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກທີ່ມີເພດ, ອາຍຸ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກແຕກຕ່າງກັນມີຄວາມຄິດເຫັນຕໍ່ກັບປັດໄຈທີ່ສົ່ງຜົນຕໍ່ການສອນຂອງຄູຊັ້ນປະຖົມສຶກສາຢູ່ນະຄອນປາກເຊ ແຂວງ ຈຳປາສັກແຕກຕ່າງກັນ.

## 4. ວິທີການຄົ້ນຄ້ວາ

### 4.1 ປະຊາກອນ ແລະ ກຸ່ມຕົວຢ່າງ

**ປະຊາກອນ:** ປະຊາກອນໃນການສຶກສາຄັ້ງໄດ້ແກ່ຄູສອນໃນໂຮງຮຽນປະຖົມສຶກສາ 34 ແຫ່ງຢູ່ນະຄອນປາກເຊ ແຂວງຈຳປາສັກ ເຊິ່ງມີຈຳນວນຄູທັງໝົດ 198 ຄົນ.

**ກຸ່ມຕົວຢ່າງ:** ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ ຄູສອນໃນໂຮງຮຽນປະຖົມສຶກສາ 34 ແຫ່ງຢູ່ນະຄອນປາກເຊ ແຂວງຈຳປາສັກ

### 4.2 ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນ

1) ເຄື່ອງມືທີ່ໃຊ້ໃນການສຶກສາຄົ້ນຄວ້າເປັນແບບສອບຖາມ (Questionnaire) ເພື່ອສອບຖາມຂໍ້ມູນກ່ຽວກັບປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກໃນ 4 ດ້ານຄື:

1) ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ 2) ຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ 3) ຄວາມຮັບຜິດຊອບທາງດ້ານວິຊາຊີບຄູ 4) ດ້ານເຕັກນິກການສອນ, ເຊິ່ງແບ່ງອອກເປັນ 3 ຕອນ, ແບບສອບຖາມປະເມີນ 5 ລະດັບ, ການວິເຄາະຂໍ້ມູນໂດຍໃຊ້ໂປຣແກຣມສຳເລັດຮູບເພື່ອຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, t-test ແລະ F-test ດັ່ງນີ້:

**ຕອນທີ 1:** ແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ເປັນລັກສະນະລາຍການ

(Check List) ປະກອບດ້ວຍ ເພດ, ອາຍຸ, ວຸດທິການສຶກສາ, ປະສົບການເຮັດວຽກ.

**ຕອນທີ 2:** ແບບສອບຖາມກ່ຽວກັບ ປັດໃຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ, ເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ.

**ຕອນທີ 3:** ເປັນແບບສອບຖາມຊະນິດຄຳຖາມປາຍເປີດ ໂດຍໃຫ້ຜູ້ຕອບແບບສອບຖາມ ສະແດງຄວາມຄິດຄວາມເຫັນເພີ່ມເຕີ່ມກ່ຽວກັບປັດໃຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາຢູ່ນະຄອນປາກເຊ ແຂວງຈຳປາສັກ.

2) ເຄື່ອງມືທີ່ໃຊ້ໃນການແບບສຳພາດ ເພື່ອສອບຖາມຂໍ້ມູນກ່ຽວກັບປັດໃຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກໃນ 4 ດ້ານ. ເຊິ່ງໄດ້ກອບຄຳຖາມທີ່ເປັບກອບໃນການສຳພາດແບ່ງອອກເປັນ 3 ສ່ວນຄື: ສ່ວນທີ 1: ຂໍ້ມູນສ່ວນຕົວຂອງຜູ້ໃຫ້ສຳພາດ, ສ່ວນທີ 2: ຄຳຖາມຂໍ້ມູນກ່ຽວກັບປັດໃຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກໃນ 4 ດ້ານ ແລະ ສ່ວນທີ 3: ຂໍ້ສະເໜີແນະອື່ນໆກ່ຽວກັບປັດໃຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ.

### 5. ການເກັບກຳລວບລວມຂໍ້ມູນ

1) ຜູ້ຄົ້ນຄວ້າໄດ້ດຳເນີນການເກັບກຳຮອບຮອມຂໍ້ມູນຈາກແບບສອບຕາມຂັ້ນຕອນດັ່ງນີ້:

- ຂໍໜັງສືສະເໜີພົວພັນວຽກຈາກຄະນະບໍດີ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກໄປສະເໜີຕໍ່ຄະນະພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ, ຄະນະຫ້ອງການສຶກສາທິການ ແລະກິລານະຄອນປາກເຊ ແລະ ຜູ້ບໍລິຫານໂຮງຮຽນປະຖົມສຶກສາ 34 ແຫ່ງຢູ່ນະຄອນປາກເຊ ແຂວງຈຳປາສັກ ເພື່ອຂໍຄວາມຮ່ວມມືໃນການເກັບກຳຂໍ້ມູນນຳກຸ່ມເປົ້າໝາຍ.
- ນຳເອົາແບບສອບຖາມໄປເກັບກຳຂໍ້ມູນນຳກຸ່ມເປົ້າໝາຍຂອງການຄົ້ນຄວ້າ ແລະ ນັດວັນເວລາເກັບຄືນດ້ວຍຕົນເອງ.
- ນຳເອົາແບບສອບຖາມຈາກກຸ່ມເປົ້າໝາຍມາກວດສອບຄວາມຖືກຕ້ອງເພື່ອນຳໄປວິເຄາະຂໍ້ມູນຕໍ່ໄປ.

2) ຜູ້ຄົ້ນຄວ້າໄດ້ດຳເນີນການເກັບກຳຮອບຮອມຂໍ້ມູນຈາກການສຳພາດຕາມຂັ້ນຕອນດັ່ງນີ້:

- ຂໍໜັງສືສະເໜີພົວພັນວຽກຈາກຄະນະບໍດີ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກໄປສະເໜີຕໍ່ຄະນະພະແນກສຶກສາທິການ ແລະກິລາແຂວງຈຳປາສັກ, ຄະນະຫ້ອງການສຶກສາທິການ ແລະກິລານະຄອນປາກເຊ ແລະ ຜູ້ບໍລິຫານໂຮງຮຽນປະຖົມສຶກສາ 4 ແຫ່ງຢູ່ນະຄອນປາກເຊ ແຂວງຈຳປາສັກ ເພື່ອຂໍຄວາມຮ່ວມມືໃນການເກັບກຳຂໍ້ມູນນຳກຸ່ມເປົ້າໝາຍ.
- ຜູ້ຄົ້ນຄວ້າວິໄຈຕິດຕໍ່ຜູ້ບໍລິຫານຂອງຫ້ອງການສຶກສາທິການ ແລະ ກິລານະຄອນປາກເຊ ແລະ ຜູ້ບໍລິຫານໂຮງຮຽນປະຖົມ 4 ແຫ່ງທີ່ເປັນກຸ່ມເປົ້າໝາຍຂອງການຄົ້ນຄວ້າ ເພື່ອຂໍເກັບກຳຂໍ້ມູນຈາກການສຳພາດ ພ້ອມທັງນັດວັນ, ເວລາ ແລະ ສະຖານທີ່ນັດການສຳພາດ ແລະເດີນທາງໄປສຳພາດຕາມການນັດໝາຍ ເລີ່ມຕົ້ນການສຳພາດໂດຍການແນະນຳຕົນເອງ, ສະເໜີຈຸດປະສົງ ແລະຂໍອະນຸຍາດບັນທຶກສຽງການສຳພາດ.
- ນຳເອົາຂໍ້ມູນທີ່ໄດ້ຈາກການສຳພາດຈາກກຸ່ມເປົ້າໝາຍມາສັງລວມເພື່ອນຳໄປວິເຄາະຂໍ້ມູນຕໍ່ໄປ.

### 6. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

ການວິເຄາະຄັ້ງນີ້ຜູ້ຄົ້ນຄວ້າວິໄຈໄດ້ໂປແກຣມສຳເລັດຮູບທາງດ້ານສະຖິຕິໂດຍເລືອກສະເພາະວິທີວິເຄາະຂໍ້ມູນທີ່ສອດຄ່ອງກັບຈຸດປະສົງໃນການສຶກສາຄົ້ນຄວ້າ ແລະ ການທົດສອບສົມມຸດຖານດັ່ງນີ້:

1). ການສຶກສາປັດໃຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ ໂດຍໃຊ້ຄ່າສະຖິຕິ

ພື້ນຖານ ໄດ້ແກ່ ຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (SD)

2). ປຽບທຽບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ ທີ່ມີເພດຕ່າງກັນ ໂດຍໃຊ້ການທົດສອບຄ່າ t-test

3). ປຽບທຽບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ ອາຍຸ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ ແຕກຕ່າງກັນ ໂດຍໃຊ້ການທົດສອບຄ່າ F-test

4). ການວິເຄາະຂໍ້ມູນທີ່ໄດ້ຈາກການສຳພາດ ຜູ້ວິໄຈນຳຂໍ້ມູນມາຈັດກຸ່ມຂໍ້ມູນ ແລະ ຫາຄວາມຄ້າຍຄືກັນຂອງຂໍ້ມູນທີ່ໄດ້ຈາກຜູ້ໃຫ້ສຳພາດ ວິເຄາະໂດຍການວິເຄາະດ້ານເນື້ອໃນ (Content Analysis) ແລ້ວນຳຂໍ້ມູນທີ່ໄດ້ມາຂຽນເປັນໄປຕາມ ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ຢູ່ນະຄອນປາກເຊ ແຂວງຈຳປາສັກ

**5. ຜົນໄດ້ຮັບ**

ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ສ່ວນຫຼາຍແມ່ນເພດຍິງຕອບແບບສອບຖາມ ມີຈຳນວນ 124 ຄົນ, ເທົ່າກັບ 94.70 ສ່ວນຮ້ອຍ, ດ້ານອາຍຸ ຫຼາຍສຸດແມ່ນ 36 ປີຂຶ້ນໄປ ມີຈຳນວນ 87 ຄົນ ເທົ່າກັບ 66.40 ສ່ວນຮ້ອຍ, ດ້ານວຸດທິການສຶກສາຫຼາຍສຸດແມ່ນລະດັບຊັ້ນສູງຂຶ້ນໄປ ມີຈຳນວນ 101 ຄົນ ເທົ່າກັບ 77.10 ສ່ວນຮ້ອຍ, ດ້ານປະສົບການສອນຫຼາຍສຸດແມ່ນ 11 ປີຂຶ້ນໄປ ມີຈຳນວນ 94 ຄົນ ເທົ່າກັບ 71.80 ສ່ວນຮ້ອຍ.

ຜົນການສຶກສາປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສານະຄອນປາກເຊ ແຂວງຈຳປາສັກ.

| ລ.ດ | ເນື້ອໃນ | ລະດັບຄວາມຄິດເຫັນ | | ແປຜົນ |
|---|---|---|---|---|
| | | $\bar{X}$ | S.D | |
| 1 | ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ | 4.26 | 0.507 | ຫຼາຍ |
| 2 | ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍ ຂອງຫຼັກສູດ | 4.21 | 0.537 | ຫຼາຍ |
| 3 | ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບຄູ | 3.95 | 0.611 | ຫຼາຍ |
| 4 | ດ້ານເຕັກນິກການສອນ | 4.36 | 0.474 | ຫຼາຍ |
| | **ລວມ** | **4.20** | **0.454** | **ຫຼາຍ** |

ຜົນການວິເຄາະຄຳຖາມປາຍເປີດກ່ຽວກັບປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກ

1. ຈາກຜົນການວິເຄາະປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ເຫັນວ່າການສອນຂອງຄູສອນຊັ້ນປະຖົມໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ແມ່ນມີຄວາມຫຍຸ້ງຍາກ, ການນຳໃຊ້ຫຼັກສູດໃໝ່ແມ່ນມີສິ່ງທ້າທາຍຫຼາຍເຮັດໃຫ້ການຂຶ້ນຫ້ອງຂອງຄູທຸກຄັ້ງຕ້ອງມີການຄົ້ນຄວ້າຫຼາຍ, ຄູສອນຈຳນວນໜຶ່ງບໍ່ໄດ້ຜ່ານການຝຶກອົບຮົມ ແລະ ວິທີການສອນກ່ຽວກັບການນຳໃຊ້ຫຼັກສູດສະບັບໃໝ່, ການລິງຊຸກຍູ້ ແລະ ຊ່ວຍເຫຼືອຄູສຶກສານິເທດຍັງບໍ່ໄດ້ຈັດຕັ້ງປະຕິບັດເປັນລະບົບ ແລະ ຕໍ່ເນື່ອງ. ນອກຈາກນີ້ຄູຈຳນວນໜຶ່ງບໍ່ຮູ້ປະດິດສ້າງ ແລະ ອອກແບບສື່ການຮຽນການສອນເພື່ອນຳໃຊ້ໃນການສອນ ເຊິ່ງເປັນສາເຫດໃຫ້ນັກຮຽນຍັງບໍ່ເຂົ້າໃຈບົດຮຽນໄດ້ດີ.

2. ເພື່ອເປັນການພັດທະນາການຮຽນການສອນຂອງຄູຊັ້ນປະຖົມສຶກສາ ຄູຄວນໄດ້ຮັບການຝຶກອົບຮົມ ແລະ ແລກປ່ຽນວິຊາການ, ເພື່ອຖອດຖອນ

ບົດຮຽນໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່, ຄູຄວນຍົກລະດັບຄວາມຮູ້ຂອງຕົນກ່ຽວກັບການແຕ່ງບົດສອນ, ຄູສຶກສານິເທດ ຄວນຈັດຕັ້ງປະຕິບັດການລົງຕິດຕາມຊຸກຍູ້ ແລະ ຊ່ວຍເຫຼືອຢ່າງທົ່ວເຖິງ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ນອກຈາກນີ້ຄູຕ້ອງເອົາໃຈໃສ່ຄົ້ນຄວ້າຊອກຮູ້ຮ່ຳຮຽນ, ເຕັກນິກວິທີການສອນ, ພ້ອມທັງມີການຈັດຝຶກອົບຮົມການຜະລິດສື່ການສອນ, ແນະນຳການນຳໃຊ້ສື່ການສອນໃຫ້ຄູສອນເພີ່ມ.

ຜົນການປຽບທຽບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ທີ່ມີເພດ, ອາຍຸ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກແຕກຕ່າງກັນມີຄວາມຄິດເຫັນຕໍ່ກັບປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ໂດຍລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິ ທີ່ລະດັບ 0.05

ຜົນການວິເຄາະແບບສຳພາດກ່ຽວກັບປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກ ໃນ 4 ດ້ານ.

**1) ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ:**

- ຄູໄດ້ມີຄວາມເຂົ້າໃຈຕໍ່ກັບພັດທະນາການດ້ານຮ່າງກາຍ, ເຂົ້າໃຈວິທີການຮຽນຮູ້ກ່ຽວກັບທັກສະຕ່າງໆຂອງນັກຮຽນ ແລະ ການໃຊ້ວັດຖຸຈິງເຂົ້າຊ່ວຍ ເພື່ອຄວາມເຂົ້າໃຈຂອງນັກຮຽນທີ່ແຕກຕ່າງກັນ.
- ຄູໄດ້ຮູ້ວິທີການສັງເກດພຶດຕິກຳຂອງນັກຮຽນຢ່າງລະອຽດ ເພື່ອໃຫ້ເຫັນວ່ານັກຮຽນມີຄວາມເຂົ້າໃຈໃນການຮຽນຄື: ຄູໄດ້ຕິດຕາມໄກ້ຊິດຕິດແທດໃຫ້ການຊ່ວຍເຫຼືອ, ມີການພົວພັນສົ່ງຂ່າວກັບຜູ້ທີ່ຂາດການຮຽນ ແລະ ຜູ້ທີ່ຮຽນອ່ອນໃຫ້ຜູ້ປົກຄອງຮັບຮູ້ແຕ່ລະໄລຍະ.
- ຄູໄດ້ມີວິທີການຊຸກຍູ້ໃຫ້ກຳລັງໃຈຜູ້ຮຽນມີຄວາມສົນໃຈ ແລະ ມີສ່ວນຮ່ວມໃນການຮຽນຄື: ເວລາສອນໃຫ້ນັກຮຽນແຕ່ລະຄົນມີສ່ວນຮ່ວມໃນການເຮັດກິດຈະກຳ, ຄູຍ້ອງຍໍຊົມເຊີຍ, ກຳລັງໃຈແກ່ນັກຮຽນທີ່ຮຽນບໍ່ທັນໄດ້ດີ, ມີການຊ່ວຍເຫຼືອນັກຮຽນຜູ້ທີ່ຍັງຂາດຄວາມສາມາດ.

**2) ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ**

- ຄູໄດ້ກຳນົດຈຸດປະສົງຕາມຫົວຂໍ້ຂອງບົດຮຽນ, ຄູເອົາໃຈນັກຮຽນເພື່ອໃຫ້ນັກຮຽນອ່ານໄດ້ ແລະຂຽນເປັນຕາມເນື້ອໃນຂອງຫຼັກສູດໃຫ້ແທດເໝາະກັບສະພາບທ້ອງຖິ່ນເນັ້ນຄວາມເຂົ້າໃຈ ແລະຄວາມຮັບຮູ້ຂອງນັກຮຽນເປັນຕົ້ນ, ຄູໄດ້ເອົາໃຈໃສ່ເນັ້ນການອ່ານອອກຂຽນເປັນ ແລະ ຖືກຕາມຫຼັກໄວຍະກອນ
- ຄູໄດ້ມີວິທີການການນຳໃຊ້ຫຼັກສູດເຂົ້າໃນການຮຽນການສອນໃຫ້ເໝາະສົມ ແລະ ສອດຄ່ອງກັບສະພາບແວດລ້ອມທ້ອງຖິ່ນຂອງຕົນຄື ວິທີການນຳໃຊ້ຫຼັກສູດເຂົ້າໃນການຮຽນການສອນໂດຍ ຄູແມ່ນໄດ້ອີງໃສ່ເນື້ອໃນບົດຮຽນຂອງແຕ່ລະບົດ, ແຕ່ລະຫົວຂໍ້, ແຕ່ລະວິຊາ ແລະ ອີງໃສ່ສະພາບແວດລ້ອມຂອງໂຮງຮຽນ,
- ຄູໄດ້ມີການຈັດກິດຈະກຳການຮຽນການສອນສອດຄ່ອງກັບເນື້ອໃນຫຼັກສູດ ໂດຍປະຕິບັດກິດຈະກຳຕົວຈິງຕາມຄວາມເໝາະສົມ ນຳພານັກຮຽນຮຽນນອກສະຖານທີ່. ການ

ຈັດກິດຈະກຳການຮຽນໃຫ້ສອດຄ່ອງກັບເນື້ອໃນຫຼັກສູດ ແມ່ນຈັດກິດຈະກຳໃນຫ້ອງຮຽນ ແລະ ນອກສະຖານທີ່ປະຕິບັດເປັນກຸ່ມ ແລະ ຈັບຄູ່ ການຫຼິ້ນເກມ, ການເລົ່ານິທານ, ການແຕ້ມຮູບ.

- ຄູມີຄວາມຮັບຮູ້ດ້ານຄວາມຮູ້, ເຂົ້າໃຈຫຼັກສູດ ແລະ ໂຄງສ້າງຫຼັກສູດປະຖົມສຶກສາຄື: ຄູເຮົາເຫັນວ່າມີຄວາມເຂົ້າໃຈກ່ຽວກັບຫຼັກສູດໃໝ່ ແລະ ເຂົ້າໃຈກ່ຽວກັບລາຍວິຊາເປົ້າໝາຍຂອງຫຼັກສູດຄູສາມາດນຳໃຊ້ຫຼັກສູດໃໝ່ຈັດການຮຽນ ການສອນຄູໄດ້ເນັ້ນໃສ່ 4 ທັກສະຄື : ຟັງ, ເວົ້າ, ອ່ານ ແລະ ຂຽນ ເປັນພື້ນຖານ.
- ໄດ້ມີຄວາມຮັບຮູ້ໃນເນື້ອໃນລາຍວິຊາ ແລະ ເຂົ້າໃຈສະພາບທາງດ້ານການຮຽນຂອງແຕ່ລະຂັ້ນຮຽນ ແລະ ຂອງແຕ່ລະວິຊາຄື: ຄວາມຮັບຮູ້ໃນເນື້ອໃນລາຍວິຊາໃນຊັ້ນປະຖົມ, ໃນການປະຕິບັດການຮຽນ ການສອນແມ່ນອີງຕາມປື້ມຄູ່ມືຄູ, ປື້ມແບບຮຽນ ແລະ ອີງໃສ່ສະພາບຕົວຈິງຂອງທ້ອງຖິ່ນ.
- ຄູໄດ້ພົບບັນຫາຄວາມຫຍຸ້ງຍາກສຳລັບຫຼັກສູດປັບປຸງໃໝ່ຊັ້ນປະຖົມສຶກສາຄື ການນຳໃຊ້ເກນການປະເມີນເຂົ້າໃນວິຊາ: ພາສາລາວເຊິ່ງມີຫຼາຍເກນ ແລະ ສັບສົນໃນເວລາປະເມີນ, ເຮັດໃຫ້ຄູຫຍຸ້ງຍາກເວລາສິດສອນ ແລະ ປະເມີນ, ເຕັກນິກວິທີການການສິ່ງຄວາມຮູ້ມີຫຼາກຫຼາຍເຮັດໃຫ້ເວລາປະຕິບັດອາດບໍ່ຄົບຖ້ວນ, ນອກຈາກນີ້ກິດຈະກຳແຕ່ລະວິຊາມີກິດຈະກຳຫຼາຍເຮັດໃຫ້ຄູສອນບໍ່ທັນກັບເວລາທີ່ກຳນົດໃນ 1 ຊົ່ວໂມງ, ກິດຈະກຳຫຼາຍກວ່າວິຊາອື່ນໆກໍຄືວິຊາພາສາລາວ, ຄະນິດສາດບາງກິດຈະກຳເກີນຄວາມຮູ້ຂອງນັກຮຽນ. ຄູຍັງບໍ່ທັນມີຄວາມຄຸ້ນເຄີຍກ່ຽວກັບການແຕ່ງບົດສອນຕາມຮ່າງໃໝ່ ຈຶ່ງເກີດຄວາມຫຍຸ້ງຍາກໃນຈຸດນີ້ຫຼາຍສົມຄວນ.

### 3) ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບ

- ຄູມີຄວາມຮັບຮູ້, ເຂົ້າໃຈ ແລະ ປະຕິບັດຕາມຈັນຍາບັນຄູໂດຍໄດ້ປະຕິບັດຝຶກຝົນຕົນເອງມີນໍ້າໃຈຊື່ສັດບໍລິສຸດ, ຮັກຕໍ່ອາຊີບ,ມີຄວາມຮັກແພງຕໍ່ຜູ້ຮຽນ, ເປັນແບບຢ່າງນຳໜ້າ, ມີການພັດທະນາຕົນເອງໃນທຸກໆດ້ານ.
- ຄູໄດ້ມີແຜນພັດທະນາແຜນການສອນຢ່າງເປັນປົກກະຕິ, ໄດ້ມີການວາງແຜນການສອນປະຈຳປີ, ປະຈຳພາກ ແລະປະຈຳເດືອນ ແລະມີການຕິດຕາມ, ກວດກາ 1 ຄັ້ງ/ເດືອນ ຢ່າງເປັນປົກກະຕິ, ປະຕິບັດຕາມແຜນການສອນ ແລະ ໂຄງການຫຼັກສູດຢ່າງເປັນປົກກະຕິ. ຄູໄດ້ປະຕິບັດຕົນຂຶ້ນຫ້ອງສອນເປັນປົກກະຕິເມື່ອພົບຄວາມຫຍຸ້ງຍາກແມ່ນໄດ້ຊ່ວຍເຫຼືອກັນ, ຊີ້ແຈງໃຫ້ຄູເຂົ້າໃຈ.

- ປະຕິບັດຕົນໃຫ້ເປັນແບບຢ່າງທີ່ດີແກ່ຜູ້ຮຽນ, ມີຄວາມສາມັກຄີກັບຜູ້ອື່ນໃນສະຖານການສຶກສາອື່ນໆ ແລະ ຊຸມຊົນຄືໄດ້ປະຕິບັດຕາມກົດລະບຽບຂອງລັດຖະກອນຄູ, ກົດລະບຽບຂອງພັກແລະ ກົດໝາຍຂອງລັດຢ່າງຖືກຕ້ອງ,ສັງຄົມ ແລະ ຊຸມຊົນໃຫ້ຄວາມເຊື່ອໝັ້ນໃຫ້ກຽດ ແລະ ເຄົາລົບນັບຖື.

4) **ດ້ານເຕັກນິກການສອນ**

- ຄູມີຂັ້ນຕອນການສອນທີ່ເປັນລະບົບ, ໂດຍວາງແຜນການສອນຕາມ 4 ຂັ້ນຕອນ ແລະຍັງສ້າງຄວາມກຽມພ້ອມຂອງນັກຮຽນເນັ້ນໃສ່ວິຊາຈຸດສຸມເປັນຫຼັກ.
- ຄູໄດ້ນໍາໃຊ້ເຕັກນິກການສອນໃໝ່ໆ ເຂົ້າໃນການຮຽນການສອນຄື: ຄູໄດ້ເນັ້ນນັກຮຽນເປັນໃຈກາງ,ນັກຮຽນປະຕິບັດຕົວຈິງທຸກກິດຈະກໍາ, ນໍາໃຊ້ເຕັກນິກທີ່ຫຼາກຫຼາຍວິທີທີ່ໄດ້ຮັບຈາກການຝຶກອົບຮົມໃນການສອນ
- ຄູສາມາດປະດິດສ້າງ ແລະ ອອກແບບສື່ການຮຽນການສອນເພື່ອນໍາໃຊ້ໃນການສອນມີຄື: ມີການແລກປ່ຽນບົດຮຽນກັນລະຫວ່າງຄູສອນໃນໂຮງຮຽນ, ພາຍໃນກຸ່ມຊອກຫາອຸປະກອນມາປະດິດຮ່ວມກັນ.
- ຄູໃນບາງໂຮງຮຽນແມ່ນໄດ້ມີການນໍາໃຊ້ເຕັກໂນໂລຊີເຂົ້າໃນການສອນ ເຊັ່ນ: ອິນເຕີເນັດ, ຮູບພາບ, ວີດີໂອ ແລະ ອື່ນໆ ເຂົ້າໃນການສອນ ເຊິ່ງມີຂໍ້ສະດວກ ແລະ ຫຍຸ້ງຍາກການນໍາໃຊ້ເຕັກໂນໂລຊີເຂົ້າໃນການສອນແມ່ນຍັງມີໜ້ອຍເນື່ອງຈາກວ່າຍັງຂາດເຄື່ອງມື (ICT) ທີ່ທັນສະໄໝ ແລະ ບຸກຄາລາກອນທີ່ມີຄວາມຊໍານິຊໍານານ.
- ຄູໄດ້ມີການນໍາໃຊ້ສື່ເຂົ້າໃນການອະທິບາຍບົດຮຽນເພື່ອໃຫ້ນັກຮຽນເຂົ້າໃຈບົດຮຽນໄດ້ຢ່າງເລິກເຊິ່ງ, ມີການນໍາໃຊ້ສື່ການສອນທີ່ຫຼາກຫຼາຍທີ່ຫາໄດ້ງ່າຍ ແລະ ຫາໄດ້ຕາມທ້ອງຖິ່ນເຂົ້າໃນການສິດສອນ ແລະ ໃຫ້ນັກຮຽນສໍາພັດຕົວຈິງ ເພື່ອໃຫ້ນັກຮຽນເຂົ້າໃຈເນື້ອໃນຢ່າງເລິກເຊິ່ງໂດຍຄູໄດ້ອະທິບາຍ ແລະ ສົມທຽບກິດຈະກໍາຕ່າງໆ
- ຄູໄດ້ຫາວິທີສ້າງກິດຈະກໍາທີ່ຫຼາຍຮູບແບບເພື່ອສ້າງບັນຍາກາດໃນຫ້ອງຮຽນໃຫ້ມີຄວາມມ່ວນຊື່ນ ໂດຍການນໍາໃຊ້ກິດຈະກໍາຂອງແຕ່ລະວິຊາທີ່ອອກແບບໃຫ້ນັກຮຽນໄດ້ຝຶກປະຕິບັດຕົວຈິງຢ່າງຫຼາກຫຼາຍ.
- ເພື່ອໃຫ້ເໝາະສົມ ກັບເນື້ອໃນບົດຮຽນ ການໃຊ້ສື່ການສອນຄູ ແລະ ຄໍາຖາມໃນສອນແມ່ນເລືອກໃສ່ກັບຫົວຂໍ້ຕົວຈິງ ແລະ ຄໍາຖາມເຈາະຈົ້ມ, ຄູນໍາໃຊ້ສື່ການສອນທີ່ເໝາະສົມກັບກິດຈະກໍາ
- ຄູໄດ້ມີວິທີການສົ່ງເສີມໃຫ້ນັກຮຽນມີແນວຄິດລິເລີ່ມ ແລະ ສົ່ງເສີມການອ່ານໜັງສືຂອງນັກຮຽນເພີ່ມຂຶ້ນຫຼາຍໆ, ເພື່ອສ້າງໃຫ້ນັກຮຽນຄົ້ນຄິດໃນເວລາຫວ່າງ ແລະ ເວລາຮຽນ
- ຄູມີວິທີການສົ່ງເສີມໃຫ້ນັກຮຽນຊອກຮູ້ຄວາມຮູ້ໃໝ່ໆໂດຍໃຫ້

ນັກຮຽນຊອກຮູ້ສິ່ງໃໝ່ໆຈາກແຫຼ່ງຮຽນຮູ້ຕ່າງໆແມ່ນແນະນຳນັກຮຽນເຂົ້າຊອກຫາຄວາມຮູ້ໃນຫ້ອງອ່ານ, ຫ້ອງສະໝຸດ, ໂທລະພາບ ແລະ ແຫຼ່ງຂໍ້ມູນທາງ ອອນລາຍ ຈາກສິ່ງຕ່າງໆ, ແນະນຳນັກຮຽນອ່ານປື້ມເລື້ອງ, ວາລະສານຂໍ້ມູນຂ່າວສານອື່ໆ.

**6. ວິພາກຜົນ**

ຈາກຜົນການຄົ້ນຄວ້າກ່ຽວກັບປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກໃນ 4 ດ້ານ ຄື: 1) ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ, 2) ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ, 3) ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບຄູ , 4) ດ້ານເຕັກນິກການສອນ ຊຶ່ງສາມາດນຳມາອະພິປາຍຜົນໃນແຕ່ລະດ້ານໄດ້ດັ່ງນີ້:

ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກໂດຍລວມທຸກດ້ານຢູ່ໃນລະດັບຫຼາຍ, ເຫັນວ່າດ້ານເຕັກນິກການສອນ ມີຄ່າສະເລ່ຍຫຼາຍກວ່າໝູ່ ເນື່ອງຈາກວ່າ ຄູໄດ້ມີເຕັກນິກການສອນ ໂດຍສະເພາະ ຄູໄດ້ຮູ້ຂັ້ນຕອນການສອນທີ່ເປັນລະບົບ ທີ່ປະກອບດ້ວຍທັກສະ ຫຼື ຂະວນການທີ່ເປັນລະບົບ, ມີຄວາມສາມາດຖ່າຍທອດຄວາມຮູ້ໃນການຈັດກິດຈະກຳການຮຽນການສອນໄດ້ຢ່າງຊັດເຈນ, ນຳໃຊ້ເຕັກນິກຕ່າງໆທີ່ໃຊ້ເສີມຂະບວນການສອນໃຫ້ມີຄຸນນະພາບ ຊຶ່ງສອດຄ່ອງກັບສີຖານ ສຸຂະວົງ ພ້ອມດ້ວຍຄະນະ (2014: 15) ໄດ້ກ່າວໄວ້ວ່າ ການສອນເປັນວິທະຍາສາດ ເປັນການສອນທີ່ມີລະບົບລະບຽບຂຶ້ນ, ມີຂັ້ນຕອນທີ່ຊັດເຈນ, ມີການສະແດງໃຫ້ເຫັນວ່າລະຫວ່າງຄູກັບນັກຮຽນ, ມີການສຶກສາຄົ້ນຄວ້າທົດລອງກ່ຽວກັບຈິດຕະວິທະຍາການຮຽນຮູ້ຂອງຜູ້ຮຽນໃນໄລຍະຕົ້ນໆ. ຄູສອນເປັນສູນກາງໃນການຈັດການປະສົບການໃຫ້ແກ່ຜູ້ຮຽນຕາມສະຖານະການ ແລະ ຄວາມພໍໃຈຂອງຄົນ, ຄວາມໝາຍທີ່ເປັນທັງວິທະຍາສາດ ແລະ ສິລະປະເປັນການປັບປ່ຽນຈາກການສອນມາສູ່ການຮຽນການສອນເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງທີ່ກຳນົດໄວ້ໂດຍອາໄສສື່ ແລະ ອຸປະກອນຕ່າງໆເຂົ້າມາຊ່ວຍປະຕິສຳພັນລະຫວ່າງຄູສອນ ແລະ ນັກຮຽນ. ຍັງສອດຄ່ອງກັບ ດາລະພາ ວັນອະນິດ (2006: 274) ກ່າວວ່າ ເຕັກນິການສອນແມ່ນ ວິທີການສະເພາະ ຫຼື ລະບົບຂະບວນການພິເສດທີ່ໃຊ້ໃນການຈັດການຮຽນການສອນ ເຕັກນິກການສອນມີຢ່າງຫຼວງຫຼາຍ ແລ້ວແຕ່ວ່າຜູ້ສອນຈະປັບໃຊ້ຢ່າງໃດໃຫ້ດີທີ່ສຸດ ແລະ ເຂົ້າໄດ້ກັບສະພາບຂອງຜູ້ຮຽນສະພາບແວດລ້ອມທີ່ຄູມີຢູ່ເຕັກນິການສອນວິທີດ່ຽວກັນອາດຈະໃຊ້ບໍ່ໄດ້ໃນກໍລະນີດ່ຽວກັນຫາກຢູ່ໃນສະຖານະການ ແລະ ສິ່ງແວດລ້ອມຕ່າງກັນ. ເພາະບໍ່ມີສະຖານະການໃດທີ່ຄືກັນໄປທຸກຮູບແບບ ຜູ້ສອນຄວນເຮັດຄວາມເຂົ້າໃຈໃນຮູບແບບຕ່າງໆກັນ ເພື່ອໃຊ້ເສີມຂະບວນການສອນຂັ້ນຕອນການສອນຫຼື ການເຮັດສິ່ງຕ່າງໆ ໃນການສອນມີເຕັກນິກວິທີການຈັດການຮຽນການສອນຢູ່ຫຼວງຫຼາຍ ແລະ ຫຼາຍວິທີສິ່ງເສີມໃຫ້ຄວາມສຳຄັນກັບຜູ້ຮຽນໃນຖານະສູນກາງຂອງການຮຽນການສອນ, ເຊິ່ງຜູ້ສອນສາມາດນຳໄປປັບໃຊ້ໃຫ້ເໝາະສົມກັບລັກສະນະຂອງຜູ້ຮຽນ, ຈຸດປະສົງການຮຽນຮູ້ ແລະ ເນື້ອຫາສາລະການຮຽນຮູ້ຕ່າງໆ.

1) ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ ໂດຍລວມຢູ່ໃນລະດັບຫຼາຍ, ເນື່ອງຈາກວ່າ ຄູມີຄວາມເຂົ້າໃຈວິທີການຮຽນຮູ້ກ່ຽວກັບທັກສະຕ່າງໆຂອງນັກຮຽນ ຄື ດ້ານການໃຊ້ພາສາເວົ້າ, ດ້ານການອ່ານ, ການທ່ອງຈຳ ແລະ ການໃຊ້ວັດຖຸຈິງເຂົ້າຊ່ວຍ ເພື່ອຄວາມເຂົ້າໃຈຂອງນັກຮຽນ, ເຊິ່ງເປັນວິທີໜຶ່ງທີ່ຊ່ວຍໃຫ້ຄູໄດ້ສັງເກດນັກຮຽນຂອງຕົນເອງວ່າແຕ່ລະຄົນໃນຫ້ອງຮຽນ

ມີຈຸດພິເສດແນວໃດ ເພື່ອຄູຈະໄດ້ກະກຽມການສິດສອນໃຫ້ມີຄຸນນະພາບ ແລະ ປະສິດທິພາບທີ່ດີຂຶ້ນ, ເຊິ່ງສອດຄ່ອງກັບອົງການ UNICEF (2016: 5) ໄດ້ກຳນົດແຜນພັດທະນາຂະແໜງ ການສຶກສາ 5 ປີ 2021-2025 ການສະໜັບສະໜູນທາງດ້ານວິຊາການຄູເປັນປັດໄຈທີ່ສຳຄັນ ເພື່ອໃຫ້ບັນລຸຜົນໄດ້ຮັບ ເຊິ່ງຈຳນວນນັກຮຽນຊັ້ນປະຖົມສຶກສາທີ່ມີຄວາມສາມາດເພິ່ງພາຕົນເອງໄດ້ໃນການອ່ານ, ການຂຽນ ແລະ ການຄຳນວນເລກພື້ນຖານ. ເຊິ່ງໃນນັ້ນ, ຄຸນນະພາບການສອນຂອງຄູແມ່ນປັດໄຈທີ່ສຳຄັນ ໃນການຮັບປະກັນຄຸນນະພາບການສຶກສາແຫ່ງຊາດ. ນອກຈາກນີ້ຄູໄດ້ຮູ້ວິທີຊຸກຍູ້ /ໃຫ້ກຳລັງໃຈຜູ້ຮຽນທຸກຄົນໃຫ້ມີສ່ວນຮ່ວມໃນການຮຽນ, ຮູ້ຈັກນຳໃຊ້ຜູ້ຮຽນໃຫ້ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

2) ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ ໂດຍສະເພາະຄູໄດ້ ມີຄວາມຮູ້, ເຂົ້າໃຈຫຼັກສູດ ແລະ ໂຄງສ້າງຫຼັກສູດປະຖົມສຶກສາ ເຊິ່ງຮູ້ກຳນົດໂຄງສ້າງເນື້ອໃນວິຊາຕ່າງໆ, ວິທີການຈັດຕັ້ງການຮຽນການສອນຂອງແຕ່ລະຊັ້ນ, ແຕ່ລະສາຍ, ການວັດຜົນ ແລະ ການປະເມີນຜົນວິຊາຮຽນຕ່າງໆ. ເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມຮູ້ ຄວາມສາມາດ, ທັກສະ, ຄວາມສະຫຼາດ ແລະ ຄຸນສົມບັດສົມທຳປະຕິວັດ. ໂດຍສອດຄ່ອງກັບເອກະສານ ຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (2019, ໜ້າ. 2-7) ມາດຕະຖານການສອນຂອງຄູປະຖົມ ໂດຍສະເພາະຄູຕ້ອງຮູ້ເນື້ອໃນລາຍວິຊາ, ຮູ້ຫຼັກສູດສາມັນ ໃນການນຳໃຊ້ຫຼັກສູດເຂົ້າໃນການຮຽນ ການສອນ, ມີຄວາມເຂົ້າໃຈໂຄງສ້າງເນື້ອໃນວິຊາຕ່າງໆ, ວິທີການຈັດຕັ້ງການຮຽນ-ການສອນຂອງແຕ່ລະຊັ້ນ, ແຕ່ລະສາຍ, ການວັດຜົນ ແລະ ການປະເມີນຜົນວິຊາຮຽນຕ່າງໆ. ເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມຮູ້ ຄວາມສາມາດ, ທັກສະ, ຄວາມສະຫຼາດ ແລະ ຄຸນສົມບັດສົມທຳປະຕິວັດ ແລະ ສອດຄ່ອງກັບຄວາມຄິດເຫັນຂອງຄູ ຄືຄູຄວນເອົາໃຈໃສ່ການສອນຕາມຫຼັກສູດ ແລະ ເປົ້າໝາຍທີ່ວາງໄວ້, ເພື່ອໃຫ້ນັກຮຽນເຂົ້າໃຈເນື້ອໃນບົດຮຽນແຕ່ລະວິຊາ ແລະ ເຂົ້າໃຈກິດຈະກຳຕາມທີ່ຄູໄດ້ມອບໝາຍໃຫ້ແຕ່ລະວິຊາ ຄູຕ້ອງມີການການພັດທະນາສື່ການຮຽນການສອນໃຫ້ສອດຄ່ອງກັບຫຼັກສູດ.

3) ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບ ເຫັນວ່າ ຄູມີຄວາມສາມັກຄີກັບຜູ້ອື່ນໃນສະຖານການສຶກສາອື່ນໆ ແລະ ຊຸມຊົນ, ເນື່ອງຈາກວ່າ ວຽກງານການຍົກສູງຄຸນນະພາບການສຶກສາແມ່ນດຳເນີນຕາມທິດຊີ້ນຳຂອງກະຊວງສຶກສາທິການ ແລະ ກິລາ ໂດຍສົມທົບກັບບັນດາຄູ່ຮ່ວມພັນທະນາທັງພາຍໃນ ແລະ ພາຍນອກ ແຕ່ຂັ້ນສູງສຸດຈົນເຖິງຂັ້ນພື້ນຖານດ້ວຍຫຼາຍວິທີການ ໂດຍມີການຈັດການແລກປ່ຽນ, ຖອດຖອນບົດຮຽນເຊິ່ງກັນ ແລະ ກັນ, ວິທີການເພື່ອນຊ່ວຍເພື່ອນ, ວິທີການນຳໃຊ້ການສຶກສາການສອນ ຊຶ່ງສອດຄ່ອງກັບ ຈະຕຸລາພັດ ປະທຸມ, 2019 ທີ່ໄດ້ໃຫ້ຄວາມໝາຍຂອງການພັດທະນາວິຊາຊີບຄູໄວ້ວ່າ ຂະບວນ

ການພັດທະນາວິຊາຊີບຄູ ໂດຍການມີສ່ວນຮ່ວມແລກປ່ຽນຮຽນຮູ້ຮ່ວມກັນໃນລະດັບສະຖານການສຶກສາ ຫຼື ລະດັບເຄືອຂ່າຍ ຫຼື ລະດັບຊາດ ແລະ ສະແດງບົດບາດໃນຊຸມຊົນການຮຽນຮູ້ທາງວິຊາຊີບ (Professional Learning Community: PLC) ດ້ວຍຄວາມສໍາພັນແບບກັນລະຍານິມິດ ມີວິໄສທັດເປົ້າໝາຍ ແລະ ພາລະກິດຮ່ວມກັນ ເພື່ອໃຫ້ເກີດເປັນວັດທະນາທໍາຂອງອົງກອນ ແລະ ສ້າງນະວັດຕະກໍາຈາກການເຂົ້າຮ່ວມໃນຊຸມຊົນການຮຽນຮູ້ທາງດ້ານວິຊາຊີບ ໂດຍນໍາຄວາມຮູ້ຄວາມສາມາດທັກສະທີ່ໄດ້ຈາກການພັດທະນາວິຊາຊີບມາພັດທະນາການຈັດການຮຽນຮູ້ຕໍ່ຜູ້ຮຽນ. ນອກຈາກນີ້ ຄູໄດ້ປະຕິບັດຕົນໃຫ້ເປັນແບບຢ່າງທີ່ດີແກ່ຜູ້ຮຽນ ແລະ ມີຄວາມສົນໃຈສະແຫວງຫາໃນການແລກປ່ຽນຄວາມຮູ້ດ້ານການສອນ ເພື່ອຮຽນຮູ້ສິ່ງໃໝ່ໆຈາກເອກະສານ, ບົດວິໄຈ, ບົດສອນແບບຢ່າງຕ່າງໆ.

4) ດ້ານເຕັກນິກການສອນ ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈໍາປາສັກ ໂດຍລວມຢູ່ໃນລະດັບຫຼາຍ ຄູໄດ້ມີຂັ້ນຕອນການສອນທີ່ເປັນລະບົບ, ສ້າງບັນຍາກາດໃນຈັດກິດຈະກໍາໃນຫ້ອງຮຽນໃຫ້ມີຄວາມມ່ວນຊື່ນ, ສົ່ງເສີມໃຫ້ນັກຮຽນມີແນວຄິດລິເລີ່ມ ແລະ ຮູ້ຈັກວິເຄາະລາຍລະອຽດບົດຮຽນ ເຊິ່ງສອດຄ່ອງກັບ ທິດສະດີຂອງ ເຄສ (Case) ໃຫ້ແນວຄິດການສອນດ້ານພຶດຕິກໍາລະຫວ່າງ ການສອນແຕ່ລະຂັ້ນຂອງການພັດທະນາການທາງສະຕິປັນຍານັ້ນ. ຂຶ້ນກັບການເພີ່ມຄວາມຊັບຊ້ອນຂອງຍຸດທະສາດການຄິດຜູ້ຮຽນຈະໃຊ້ຄວາມຄິດທີ່ຊັບຊ້ອນໄດ້ເມື່ອໄດ້ຮັບປະສົບການຢ່າງມີຂັ້ນຕອນ, ການຈັດການສອນລັກສະນະນີ້ຈັດລໍາດັບຕາມຄວາມມຸ່ງໝາຍຂອງກິດຈະກໍາທີ່ຈະຮຽນຈັດລໍາດັບຂັ້ນການປະຕິບັດເພື່ອນໍາໄປສູ່ຄວາມມຸ່ງໝາຍນັ້ນໆ.ໂດຍການປຽບທຽບການຄິດກັບທັກສະທີ່ຜູ້ຮຽນໄດ້ຮັບມີການຈັດລະດັບຄວາມສາມາດ ແລະ ການປະຕິບັດຂອງຜູ້ຮຽນມີແບບຝຶກຫັດ ຫຼື ຕົວຢ່າງໃຫ້ຜູ້ຮຽນໄດ້ສຶກສາ.

**7. ສະຫຼຸບຜົນ**

ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈໍາປາສັກ ໂດຍລວມ ຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນແຕ່ລະດ້ານ ພົບວ່າ ທຸກດ້ານຢູ່ໃນລະດັບຫຼາຍ ຊຶ່ງລຽງຕາມລໍາດັບ ຄ່າສະເລ່ຍແຕ່ຫຼາຍຫາໜ້ອຍຕາມລໍາດັບ ເຫັນວ່າດ້ານເຕັກນິກການສອນ, ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ, ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ ແລະ ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບຄູ.

1) ດ້ານຄວາມຮູ້ກ່ຽວກັບຜູ້ຮຽນ ພົບວ່າ ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈໍາປາສັກ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ: ຂໍ້ເຂົ້າໃຈວິທີການຮຽນຮູ້ກ່ຽວກັບທັກສະຕ່າງໆຂອງນັກຮຽນ ຄື ດ້ານການໃຊ້ພາສາເວົ້າ, ດ້ານການອ່ານ, ການທ່ອງຈໍາ ແລະ ການໃຊ້ວັດຖຸຈິງເຂົ້າຊ່ວຍ ເພື່ອຄວາມເຂົ້າໃຈຂອງນັກຮຽນ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນ ຮູ້ວິທີຊຸກຍູ້ /ໃຫ້ກໍາລັງໃຈຜູ້ຮຽນທຸກຄົນໃຫ້ມີສ່ວນຮ່ວມໃນການຮຽນ, ຮູ້ຈັກນໍາໃຊ້ຜູ້ຮຽນໃຫ້ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຢູ່ໃນລະດັບຫຼາຍ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ ແມ່ນ ຮູ້ສ້າງບັນຍາກາດທີ່

ສະໜັບສະໜູນການຮຽນ ແລະ ຮູ້ຈັກຈັດຫ້ອງຮຽນໃຫ້ມີຄວາມປອດໄພ ເພື່ອໃຫ້ຜູ້ຮຽນມີຄວາມເບີກບານມ່ວນຊື່ນໃນເວລາຮຽນ ຢູ່ໃນລະດັບຫຼາຍ

2) ດ້ານຄວາມຮູ້ກ່ຽວກັບລາຍວິຊາ ແລະ ເປົ້າໝາຍຂອງຫຼັກສູດ ພົບວ່າ ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ: ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ຄື ຄູມີຄວາມຮູ້, ເຂົ້າໃຈຫຼັກສູດ ແລະ ໂຄງສ້າງຫຼັກສູດປະຖົມສຶກສາ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນ ການຈັດກິດຈະກຳການຮຽນການສອນສອດຄ່ອງກັບເນື້ອໃນຫຼັກສູດ ຢູ່ໃນລະດັບຫຼາຍ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ ແມ່ນ ຮູ້ປະດິດສ້າງ ແລະ ອອກແບບສື່ການຮຽນການສອນເພື່ອນຳໃຊ້ໃນການສອນ ຢູ່ໃນລະດັບປານກາງ.

3) ດ້ານຄວາມຮັບຜິດຊອບທາງດ້ານວິຊາຊີບ ພົບວ່າ ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ: ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ຄື ມີຄວາມສາມັກຄີກັບຜູ້ອື່ນໃນສະຖານການສຶກສາອື່ນໆ ແລະ ຊຸມຊົນ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນ ປະຕິບັດຕົນໃຫ້ເປັນແບບຢ່າງທີ່ດີແກ່ຜູ້ຮຽນ ແລະ ມີຄວາມສົນໃຈສະແຫວງຫາໃນການແລກປ່ຽນຄວາມຮູ້ດ້ານການສອນ ເພື່ອຮຽນຮູ້ສິ່ງໃໝ່ໆຈາກເອກະສານ, ບົດວິໄຈ, ບົດສອນແບບຢ່າງຕ່າງໆ ຢູ່ໃນລະດັບຫຼາຍ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ຮູ້, ເຂົ້າໃຈ ແລະ ປະຕິບັດໄດ້ຕາມຈັນຍາບັນຄູ ຢູ່ໃນລະດັບຫຼາຍ.

4) ດ້ານເຕັກນິກການສອນ ພົບວ່າ ປັດໄຈທີ່ມີຕໍ່ປະສິດທິພາບການສອນຂອງຄູຊັ້ນປະຖົມສຶກສາ ນະຄອນປາກເຊ ແຂວງຈຳປາສັກ ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ: ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ຄື ມີຂັ້ນຕອນການສອນທີ່ເປັນລະບົບ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນ ສ້າງບັນຍາກາດໃນຈັດກິດຈະກຳໃນຫ້ອງຮຽນໃຫ້ມີຄວາມມ່ວນຊື່ນຢູ່ໃນລະດັບຫຼາຍ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ສິ່ງເສີມໃຫ້ນັກຮຽນຊອກຫາຮຽນຮູ້ຄວາມຮູ້ໃໝ່ຈາກແຫຼ່ງຮຽນຮູ້ຕ່າງໆ ຢູ່ໃນລະດັບຫຼາຍ

**- ຂໍ້ສະເໜີແນະທາງດ້ານການນຳຜົນການວິໄຈໄປໃຊ້**

ນຳຜົນການວິໄຈກ່ຽວກັບປັດໄຈທີ່ສົ່ງຕໍ່ປະສິດທິພາບການສອນຂອງຄູສອນຊັ້ນປະຖົມສຶກສາ ໃນຄັ້ງນີ້ຕໍ່ຫ້ອງການສຶກສາ ແລະ ກິລາ ນະຄອນປາກເຊ ແຂວງ ຈຳປາສັກ ໄດ້ຮັບຮູ້ ເພື່ອເປັນແນວທາງໃນການພັດນາການຮຽນການສອນ.

1) ຄວນມີການຝຶກອົບຮົມ ແລະ ແລກປ່ຽນວິຊາການ, ເພື່ອຖອດຖອນບົດຮຽນໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ໃຫ້ແກ່ຄູ.

2) ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ຄວນຈັດຕັ້ງປະຕິບັດການລົງຕິດຕາມຊຸກຍູ້ ແລະ ຊ່ວຍເຫຼືອຢ່າງທົ່ວເຖິງ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ.

3) ຜູ້ບໍລິຫານຄວນມີການຈັດການກວດກາ, ຕິດຕາມການຈັດການຮຽນການສອນຢ່າງເຄັ່ງຄັດ.

4) ຄວນມີການຝຶກອົບຮົມການຜະລິດສື່ການສອນ, ແນະນຳການນຳໃຊ້ສື່ການສອນ.

5) ວິທີການສ້າງບັນຍາກາດໃນຈັດກິດຈະກຳໃນຫ້ອງຮຽນໃຫ້ມີຄວາມມ່ວນຊື່ນ, ຂັ້ນຕອນການສອນທີ່ເປັນລະບົບ

**- ຂໍ້ສະເໜີແນະສຳລັບການວິໄຈຄັ້ງຕໍ່ໄປ**

1) ຄວນມີການສຶກສາກ່ຽວກັບປັດໄຈທີ່ສົ່ງຕໍ່ປະສິດທິພາບການສອນຂອງຄູສອນຊັ້ນປະຖົມສຶກສາຢູ່ເມືອງອື່ນໆ ໃນແຂວງຈຳປາສັກ ເພື່ອປຽບທຽບຜົນດັ່ງກ່າວ.

2) ຄວນມີການສຶກສາກ່ຽວກັບຄວາມຕ້ອງການພັດທະນາການສອນຂອງຄູຊັ້ນປະຖົມສຶກສາ ເພື່ອເປັນແນວທາງການພັດທະນາການສອນຂອງຄູຊັ້ນປະຖົມສຶກສາໃນແຂວງ ຈຳປາສັກ.

**8. ເອກະສານອ້າງອີງ**


ກະຊວງສຶກສາທິການ ແລະ ກິລາ (2020). ວິໄສທັດ ຮອດປີ2023, ແຜນຍຸດທະສາດການ ພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງ ການສຶກສາທິການ ແລະ ກິລາ ຮອດປີ 2025. ກົມຈັດຕັ້ງ ແລະ ພະນັກງານ: ບໍລິສັດລັດວິ ສະຫະກິດໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ (2015). ກົດໝາຍວ່າ ດ້ວຍການສຶກສາ (ສະບັບປັບປຸງ). ນະຄອນຫຼວງ ວຽງຈັນ: ໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ. (2020). ແຜນ ພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ່ IX 2021-2025. ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ ກົມສ້າງຄູ ພະແນກ ບຳລຸງຄູ. (2015). ປຶ້ມຄູ່ມືແນະນຳເພີ່ມການ ສອນວິຊາພາສາລາວຊັ້ນປະຖົມສຶກສາປີທີ 1,2,3 ສະໜັບສະໜູນໂດຍອົງການ UNESCO Bangkok. ນະຄອນຫຼວງວຽງຈັນ: GoodHead Printing and Packaging Group Co.,Ltd.

ກະຊວງສຶກສາທິການ ແລະ ກິລາ. (2015). ວິໄສທັດ ຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020). ນະຄອນຫຼວງ ວຽງຈັນ.

ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ. (2019). ມາດຕະຖານການສອນຂອງຄູຊັ້ນປະຖົມສຶກສາ. ນະຄອນຫຼວງວຽງຈັນ: ກົມສ້າງຄູ ແຜນງານການ ປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າ ຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ.

ສີຖານ ສຸຂະວົງ ພ້ອມດ້ວຍຄະນະ. (2014). ພາວະ ຜູ້ນຳທາງວິຊາການຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.ນະຄອນຫຼວງວຽງ ຈັນ: ໂຮງພິມສຶກສາ.

ສີມົງຄົນ ເທບເລນູ. (2002). ເອກະສານຄຳສອນ ລາຍ ວິຊາທັກສະ ແລະ ເຕັກນິກການສອນ. ກຣຸງ ເທບ: ຄະນະສຶກສາສາດ ສະຖາບັນບ້ານ ສົມເດັດເຈົ້າພະຍາ.

ເສື້ອສີສົ້ມ. (2013).ການພັດທະນາວິຊາຊີບຄູ.ໄດ້ທົດ ລອງຄົນເສື້ອສີສົ້ມ: permalink:https://oknation.nationtv.tv/blog/tippanaw/2013/03/12/entry-1

ຕຸລາຈັນ ຄຳພິໄຊ ( 2022). ສຶກສາຄວາມຕ້ອງການໃນ ການພັດທະນາການສອນຂອງຄູ ຊັ້ນປະຖົມ ສຶກສາໃນເມືອງປາກງື່ມ ນະຄອນຫຼວງວຽງ ຈັນ. ວິທະຍານິພົນປະລິນຍາໂທ ສຶກສາສາດ ສາຂາ ການສຶກສາພັດທະນາທ້ອງຖິ່ນ.

ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາການສຶກ ສາ ແລະ ກິລາປະຈຳສົກຮຽນ ( 2020-2021) ແລະ ແຜນ ພັດທະນາການສຶກສາ ແລະ ກິລາປະຈຳສົກຮຽນ ( 2021-2022 ).

ແຜນງານປັບປຸງຄຸນນະພາບ ແລະ ການຂະຫຍາຍ ໂອກາດການເຂົ້າຮຽນສຳລັບການສຶກສາຂັ້ນ ພື້ນຖານ ໃນ ສ ປ ປ ລາວ. (2019). ມາດ ຄະຖານການສອນຂອງຄູສອນຊັ້ນປະຖົມ ສຶກສາ. ນະຄອນຫຼວງວຽງຈັນ: ກົມສ້າງຄູ.

ວົງເດືອນ ໂອໃສ. (2020). ບົດລາຍງານຍົກສູງຄຸນ ນະພາບຄູຊັ້ນປະຖົມສຶກສາຢູ່ປະເທດເຮົາ. ນະຄອນຫຼວງວຽງຈັນ: ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ວັດທະນາ ຈັນເພັງໄຊ. (2019). ຄວາມຕ້ອງການຂອງຄູ ຕໍ່ການພັດທະນາບຸກຄະລາກອນຄູໂຮງຮຽນ ປະຖົມພາກເອກະຊົນໃນເທດສະບານ ນະຄອນຫຼວງວຽງຈັນ. ນະຄອນຫຼວງວຽງ ຈັນ: ຄະນະສຶກສາສາດ ມະຫາວິທະຍາໄລ ແຫ່ງຊາດ.

ອາເທຕະຍາ ແກ້ວສາລີທາ. (2015). ປັດໄຈທີ່ສົ່ງຜົນ ກະທົບຕໍ່ປະສິດທິພາບການສອນຂອງຄູ ສອນຫຼັກສູດປະລິນຍາ ວິຊາຊີບໃນໂຮງຮຽນ ມັດທະຍົມ ພາຍໃຕ້ຫ້ອງການສຶກສາເຂດ ບໍລິການການສຶກສາມັດທະຍົມ ເຂດ 32.

ວາລະສານວິໄຈ ແລະ ພັດທະນາ, ມະຫາວິທະຍາໄລຣາດຊະພັດບູລີລຳ.

Daniel Muijs, Jim Campbell, Leonidas Kyriakides Wendy Robinson. (2004). Assessing Teacher Effectiveness: Developing a differentiated model. London: RoutledgeFalmer. doi:https://doi.org/10.4324/9780203403709

Harbison, F.H & Myers, C.A. (1998). Education Manpower and Economic Growth Strategies of Human Resource Development. Newyork: McGraw-Hill.

Ivancevich, J.M. (2007). Human Resource Management. New York: Published by Mc Graw-Hill Companies, Inc.

Jennifer King Rice. (2003). Teacher QualityG Understanding the Effectiveness of Teacher Attributes. ໄດ້ທົດລອງຄືນ Economic Poicy Institute: https://www.epi.org/publication/books_teacher_quality_execsum_intro/

UNICEF. (2016). Review of Pedagogical Support System for Primary Education in Lao PDR. Vientiane Capital.